<u>ສະຖານເອກອັກຄະລັດຖະທູດແຫ່ງ ສປປ ລາວ ຈັດພິທີສະເຫລີມສະຫລອງວັນສະຖາປະນາ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຄົບຮອບ 40 ປີ, ທີ່ນະຄອນຫລວງວໍຊິງຕັນ, ດີຊີ</u>







ໃນຕອນແລງຂອງວັນທີ 4 ທັນວາ 2015, ສະຖານເອກອັກຄະລັດຖະທູດແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະຈຳສະຫະລັດ ອາເມຣິກາ, ການາດາ ແລະ ແມັກຊິກ ໄດ້ຈັດພິທີສະເຫລີມສະຫລອງ ວັນສະຖາປະນາ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວຄົບຮອບ 40 ປີ ທີ່ໂຮງແຮມມາຣິອົດ, ນະຄອນຫລວງວໍຊິງຕັນ, ດີຊີ ໂດຍມີ ທ່ານ ນາງ Betty McCollum, ສະມາຊິກສະພາຜູ້ແທນລາດສະດອນຈາກລັດມິນນີໂຊຕາ, ພັກດີໂມແກຣດ; ທ່ານ Daniel Russel, ລັດຖະມົນຕີຊ່ວຍວ່າການກະຊວງການຕ່າງປະເທດສະຫະລັດ ອາເມຣິກາ ແລະ ທ່ານ Ben Rhodes, ຮອງທີ່ປຶກສາດ້ານຄວາມໝັ້ນຄົງແຫ່ງຊາດປະຈຳທຳນຽບຂາວ, ເຊິ່ງທັງ 3 ທ່ານ ໄດ້ເຂົ້າຮ່ວມເປັນແຂກກິດຕິມະສັກໃຫ້ພິທີສະເຫລີມສະຫລອງວັນຊາດຄັ້ງນີ້.

ພ້ອມດຽວກັນກໍໄດ້ມີ ທ່ານ ດຣ. ຂຽນ ພົນສຸຣິວົງ, ເອກອັກຄະລັດຖະທູດ, ຜູ້ຕາງໜ້າຖາວອນແຫ່ງ ສປປ ລາວ ປະຈຳສະຫະປະຊາຊາດ, ບັນດາທູຕານຸທູດປະເທດສະມາຊິກອາຊຽນ ປະຈຳສະຫະລັດ ອາເມຣິກາ ບັນດາພະນັກ



ງານຂັ້ນສູງຈາກກະຊວງການຕ່າງປະເທດສະຫະລັດ, ກະຊວງປ້ອງກັນປະເທດສະຫະລັດ, ອົງການຈັດຕັ້ງສາກົນຕ່າງໆຈາກພາກລັດ ແລະ ເອກະຊົນພ້ອມດ້ວຍບັນດາພີ່ນ້ອງຄົນເຊື້ອຊາດລາວຈຳນວນໜຶ່ງຈາກລັດໃກ້ຄຽງ ແລະ ລັດຫ່າງໄກຢູ່ໃນສະຫະລັດອາເມຣິກາ ປະມານ 200 ທ່ານໄດ້ໃຫ້ກຽດເຂົ້າຮ່ວມໃນພິທີສະຫລອງວັນສຳຄັນດັ່ງກ່າວ.



ໃນໂອກາດສຳຄັນດັ່ງກ່າວນີ້, ທ່ານ ໄມ ໄຊຍະວົງສ໌, ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສປປ ລາວ ປະຈຳສະຫະລັດ ອາເມຣິກາ, ການາດາ ແລະ ແມັກຊິກ ໄດ້ຂຶ້ນກ່າວຄຳເຫັນໂດຍເນັ້ນໃຫ້ເຫັນເຖິງຄວາມໝາຍຄວາມສຳຄັນຂອງວັນທີ 2 ທັນວາ ທີ່ປະຊາຊົນລາວບັນດາເຜົ່າມີຄວາມພາກພູມໃຈທະນົງໃຈທີ່ສາມາດຍາດໄດ້ເອກະລາດ ອິດສະຫລະພາບ, ຄວາມເປັນເຈົ້າຂອງປະເທດຊາດບ້ານເມືອງ ແລະ ແຈ້ງຜົນສຳເລັດໃນ ການພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ ຕະຫລອດໄລຍະ 40 ປີ ຜ່ານມາໃນແຕ່ລະດ້ານ ເຊັ່ນ: ການຍົກສູງຊີວິດການເປັນຢູ່ຂອງປະຊາຊົນ, ການພັດທະນາການສຶກສາ, ການພັດທະນາດ້ານສາທາລະນະສຸກ, ການພັດທະນາພື້ນຖານໂຄງລ່າງ ແລະ ການຫລຸດຜ່ອນດ້ານຄວາມທຸກຍາກ, ເຊິ່ງເຫັນໄດ້ວ່າມີຜົນສຳ ເລັດຢ່າງເປັນຮູບປະທຳໂດຍສະເພາະການພັດທະນາເສດຖະກິດ ໄດ້ມີບາດກ້າວຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ສະໝ່ຳສະເໝີ. ພ້ອມນັ້ນ, ກໍໄດ້ຍົກໃຫ້ເຫັນເຖິງການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຂອງລັດຖະບານໃນແຕ່ລະໄລຍະພາຍຫລັງທີ່ໄດ້ຮັບການສະຖາປະນາໃນປີ



1975 ເປັນຕົ້ນມາ ແລະ ການຈັດຕັ້ງຜັນຂະຫຍາຍແນວທາງການຕ່າງປະເທດ ຂອງພັກ ແລະ ລັດໃນໄລຍະ 40 ປີຜ່ານມາ, ເຊິ່ງສາມາດເຮັດໃຫ້ບົດບາດຂອງ ສປປ ລາວ ສູງເດັ່ນຂຶ້ນໃນເວທີພາກພື້ນ ແລະ ສາກົນ. ພ້ອມດຽວກັນນັ້ນ, ທ່ານກໍໄດ້ຍົກໃຫ້ເຫັນວ່າໃນປີ 2016 ນີ້ ສປປ ລາວ ຈະໄດ້ຮັບກຽດເປັນເຈົ້າພາບຈັດກອງປະຊຸມອາຊຽນ ແລະ ກອງປະຊຸມອາຊຽນທີ່ກ່ຽວຂ້ອງຕ່າງໆນັ້ນ ຖືເປັນສິ່ງທ້າທາຍສຳລັບ ສປປ ລາວ ພາຍຫລັງທີ່ໄດ້ປະກາດການສ້າງຕັ້ງ ເປັນສະມາຄົມເສດຖະກິດອາຊຽນໃນທ້າຍປີ 2015 ນີ້ ແລະ ຫວັງຢ່າງຍິ່ງວ່າ ຈະໄດ້ຮັບການສະໜັບສະໜູນຈາກປະເທດສະມາຊິກອາຊຽນກໍຄືປະເທດທີ່ເປັນຄູ່ຮ່ວມອາຊຽນ ໂດຍສະເພາະແມ່ນ ສະຫະລັດ ອາເມຣິກາ ແລະ ຈາກອົງການຈັດຕັ້ງສາກົນຕ່າງໆ ເພື່ອເຮັດໃຫ້ການເປັນປະທານ ຂອງ ສປປ ລາວ ໃຫ້ໄດ້ຮັບຜົນສຳເລັດຢ່າງຈົບງາມ. ນອກນັ້ນ, ທ່ານທູດ ໄມ ໄຊຍະວົງສ໌ ກໍໄດ້ຖືໂອກາດສຳຄັນດັ່ງກ່າວນີ້ສະແດງຄວາມຊົມເຊີຍ ຕໍ່ການຮ່ວມມືສອງຝ່າຍລະຫວ່າງ ສປປ ລາວ ແລະ ສະຫະລັດອາເມຣິກາ ຄົບຮອບ 60 ປີ, ເຊິ່ງເຫັນວ່າ ມີຄວາມຄືບໜ້າ ແລະ ຂະຫຍາຍຕົວຂຶ້ນເລື້ອຍໆ.

ພິເສດໃນງານຄັ້ງນີ້, ສະຖານທູດໄດ້ເຊື້ອເຊີນໃຫ້ທ່ານ ນາງ Betty McCollum, ທ່ານ Daniel Russel ແລະ ທ່ານ Ben Rhodes, ເຊິ່ງເປັນແຂກກິດຕິມະສັກທີ່ສຳຄັນຂອງພິທີ ແລະ ທັງເປັນຜູ້ທີ່ໃຫ້ການສະໜັບສະໜູນ ສປປ ລາວ ໃນດ້ານການຮ່ວມມືສອງຝ່າຍ ໂດຍສະເພາະການຊ່ວຍເຫລືອດ້ານການເກັບກູ້ລະເບີດທີ່ຍັງບໍ່ທັນແຕກທີ່ຕົກຄ້າງມາແຕ່ປາງສົງຄາມ, ການສະໜັບສະໜູນ ສປປ ລາວ ເປັນປະທານອາຊຽນ ແລະ ຊຸກຍູ້ໃຫ້ປະທານາທິບໍດີໂອບາມາເດີນທາງໄປຢ້ຽມຢາມ ສປປ ລາວ ແລະ ເຂົ້າຮ່ວມກອງປະຊຸມສຸດຍອດອາຊຽນ ແລະ ກອງປະຊຸມສຸດຍອດທີ່ ກ່ຽວຂ້ອງອື່ນໆທີ່ ສປປ ລາວ ຈະເປັນເຈົ້າພາບໃນປີ 2016 ນີ້. ຫລັງຈາກນັ້ນ, ທ່ານທູດ ໄມ ໄຊຍະວົງສ໌ ກໍໄດ້ຖືໂອກາດໃຫ້ກຽດອວຍພອນແດ່ປະທານປະເທດ ຈູມມາລີ ໄຊຍະສອນ ແລະ ທ່ານປະທານາທິບໍດີ ບາຣັກ ໂອບາມາ ໃຫ້ມີສຸຂະພາບເຂັ້ມແຂງ, ເພື່ອມິດຕະພາບ ແລະ ການຮ່ວມມືຂອງສອງປະເທດ, ແລະ ອວຍພອນຕໍ່ແຂກທີ່ມາເຂົ້າຮ່ວມໃຫ້ມີສຸຂະພາບເຂັ້ມແຂງ ແລະ ສຳເລັດໜ້າທີ່ຂອງຕົນ. ຫລັງຈາກນັ້ນກໍໄດ້ມີການຮັບປະທານອາຫານຄ່ຳຮ່ວມກັນ ອັນໄດ້ເຮັດໃຫ້ແຂກທີ່ມາຮ່ວມງານສະແດງຄວາມເພິ່ງພໍໃຈຕໍ່ການສະເຫລີມສະຫລອງວັນຊາດປີນີ້ ດ້ວຍຜົນສຳເລັດຢ່າງຈົບງາມ.

-----------------------------------------------------------